**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 2671 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 15 ມິຖຸນາ 2026

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 030/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 4883/ສສກ, ລົງວັນທີ 23 ກັນຍາ 2022;
- ອີງຕາມ ແຜນຄາດຄະເນງົບປະມານຈັດຊື້-ຈັດຈ້າງ ປະຈໍາປີ 2026 ຂອງສໍານັກກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 431/ຫກ, ລົງວັນທີ 28 ກຸມພາ 2026;

1. ຫ້ອງການກະຊວງສຶກສາທິການ ແລະ ກິລາ ໄດ້ຮັບອະນຸມັດງົບປະມານປະຈໍາສົກປີ 2026 ເພື່ອການຈັດຊື້-ຈັດຈ້າງ ການບໍລິການບໍາລຸງຮັກສາລົບໂດຍສານ ຢູ່ຕຶກໄອຊີທີຂອງກະຊວງສຶກສາທິການ ແລະ ກິລາ ປະຈໍາປີ 2026.
2. ຫ້ອງການກະຊວງສຶກສາທິການ ແລະ ກິລາ ໃນນາມເຈົ້າຂອງໂຄງການ ຂໍເຊີນບໍລິສັດຂອງທ່ານ ເຂົ້າຮ່ວມຍື່ນຊອງປະມູນການຈັດຊື້ການບໍລິການບໍາລຸງຮັກສາລົບໂດຍສານ ຢູ່ຕຶກໄອຊີທີຂອງກະຊວງສຶກສາທິການ ແລະ ກິລາ ປະຈໍາປີ 2026, ໃນນີ້ໄລຍະເວລາໃນການບໍລິການ ແມ່ນເລີ່ມແຕ່ ວັນທີ 01 ສິງຫາ 2026 ຫາ ວັນທີ 31 ກໍລະກົດ 2027 (12 ເດືອນ).
3. ການປະມູນນີ້ ຈະດໍາເນີນຕາມຂັ້ນຕອນການປະມູນ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ , ລົງວັນທີ 13 ກຸມພາມີນາ 2019.
4. ຊອງປະມູນຕ້ອງສົ່ງຄະນະຮັບຜິດຊອບກ່ອນເວລາ 09: 00 ໂມງ ຂອງ ວັນທີ 30 ມິຖຸນາ 2026 ທີ່ຫ້ອງປະຊຸມ 405 ຫ້ອງການກະຊວງສຶກສາທິການ ແລະ ກິລາ ເຂດ ບ້ານ ຊຽງຍືນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ເບີໂທລະສັບ 021 216004, 020 54366695 ແລະ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09: 00 ໂມງ ຂອງວັນທີ 30 ມິຖຸນາ 2026 ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ.

**ຫົວໜ້າຫ້ອງການ**

ກະຊວງສຶກສາທິການ ແລະ ກິລາ ຫ້ອງການ

**ຮສ. ປອ. ຫຼ້າວັນ ວົງຄໍາສາ**